ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 104 /ຄຊກລ.ສຄ

ນະຄອນຫລວງວຽງຈັນ, ວັນທີ: 10 APR 2018.

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 01, 2018

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 04, 2017 ໄດ້ໄຂຂຶ້ນໃນວັນທີ 21 ເດືອນ ມີນາ ປີ 2018, ເວລາ 08:30 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ບຸນພະນິດ ໂສມວິຈິດ ຮອງຫົວໜ້າຫ້ອງການ ຄຊກລ, ຜູ້ຊີ້ນຳວຽກງານປະຕິບັດງານ, ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 12 ທ່ານ, ຍິງ: 05 ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 01 ປີ 2018 ແລະ ແຜນຄາດຄະເນ ໃນໄຕມາດ 02 ປີ 2018 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ກອງປະຊຸມກຸ່ມວິຊາການ, ກອງປະຊຸມທົບທວນ ອຸປະກອນຂອງການໂຄສະນາຜົນຮ້າຍຂອງ ລບຕ, ຈັດພິມອຸປະກອນທີ່ໄດ້ຮັບຈາກກອງປະຊຸມ, ປະສານສົມທົບກັບ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ຈັດລາຍການວິທະຍຸ ຢູ່ 5 ແຂວງ.

- ສຳລັບ ສະຖິຕິການເກີດອຸປະຕິເຫດ ລວມທັງອຸປະຕິເຫດ ທີ່ເກີດຢູ່ແຂວງເຊກອງ ທີ່ຜ່ານຫາໃນໄລຍະມໍ່ໆ ລວມທັງໝົດແມ່ນ 4 ຄົນ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ ທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 02, ປີ 2018 ໃນນີ້ ໄດ້ມີ ຜູ້ຕາງໜ້າ ກົມພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ຜູ້ຕາງໜ້າອົງການສະຫະປະຊາຊາດ, ທ່ານຜູ້ຕາງໜ້າວິທະຍຸແຫ່ງຊາດລາວ, ທ່ານຜູ້ຕາງໜ້າສູນກາງຊາວໜຸ່ມ, ທ່ານຜູ້ຕາງໜ້າອົງການນ້ຳໃຈນັກກິລາ ປະຈຳ ສປປ ລາວ, ທ່ານຜູ້ຕາງໜ້າໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ອົງການເກັບກູ້ລະເບີດຮາໂລເທັສ໌ (Halo-Trust), ຜູ້ຕາງໜ້າ ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 01, 2018 ແລະ ແຜນວຽກປະຈຳໄຕມາດ 02, 2018. ສ່ວນລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນ ພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ໃນເອກະ ສານ ຊ້ອນທ້າຍ.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

1. ກົມພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ ສາເຫດທີ່ພາໃຫ້ເກີດອຸປະຕິເຫດຈາກການດັງໄຟໃສ່ບ່ອນເກົ່າທີ່ເຄີຍດັງ ສະນັ້ນ ການໂຄສະນາພວກເຮົາຈະແກ້ແນວໃດ, ສໍາລັບບັນຫາຫ້ອງການ ຄຊກລ ກໍ່ໄດ້ໃຫ້ຄໍາເຫັນວ່າ ໃນການໂຄສະນາພວກເຮົາໂປສເຕີໃໝ່ນີ້ແມ່ນເນັ້ນວ່າໃຫ້ພູນດິນຂຶ້ນ.
2. ວິທະຍຸແຫ່ງຊາດລາວ ໄດ້ຜະລິດລາຍການໂຄສະນາ ຜົນຮ້າຍຂອງ ລບຕ ປະຈຸບັນຂໍ້ມູນຍັງບໍ່ທັນຫຼາຍບໍ່ທັນໄດ້ລົງເກັບກໍາຂໍ້ມູນ, ສະນັ້ນ ຈຶ່ງໝູນໃຊ້ຂໍ້ມູນເກົ່າມາເປັນຂໍ້ມູນໃນການໂຄສະນາ.
- ໃນຕໍ່ໜ້າ ຖ້າເປັນໄປໄດ້ຢາກຂໍທຶນໃນການເກັບກໍາຂໍ້ມູນ ເພື່ອເພີ່ມໃນສຽງສໍາພາດຈາກປະຊາຊົນ ເພີ່ມທຶນໃນການຜະລິດລາຍງານ, ສະເໜີບັນດາອົງການປະຕິບັດງານເປັນສື່ຊ່ວຍໃນການໂຄສະນາທາງວິທະຍຸ.
3. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ໄດ້ຈັດການຝຶກອົບຮົມທົດລອງວຽກງານ RE ແລະ NTS.
- ໄຕມາດ 2 ແມ່ນຈະໄດ້ລົງຕິດຕາມຖອດຖອນບົດຮຽນ ໃນການທົດລອງກິດຈະກໍາໃໝ່ຢູ່ຂັ້ນແຂວງ ປັບປຸງກິດຈະກໍາໃໝ່ຂອງວຽກງານ ຄສສລ.
4. ສູນກາງຊາວໜຸ່ມສະເໜີ ຢາກຮ່ວມມືນໍາ ຄຊກລ ເພາະທາງຊາວໜຸ່ມເຮົາມີ ຊາວໜຸ່ມບ້ານ ກໍາລັງຂຶ້ນແຜນເປັນຄູ່ຮ່ວມງານກັນ.
5. ອົງການ Halo trust ຜ່ານການເຄື່ອນໄຫວວຽກງານຕົວຈິງ ພວກເຮົາເຫັນວ່າ:
- ບັນຫາ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກໍາຕົວຈິງ ບາງບ້ານຍັງບໍ່ໃຫ້ການຮ່ວມມືໄດ້ດີເທົ່າທີ່ຄວນ, ປະຊາຊົນບາງຄົນຍັງບໍ່ຢາກລາຍງານລະເບີດທີ່ພົບເຫັນໃຫ້ທາງທີມງານ ຫຼື ລາຍງານແລ້ວບໍ່ພາໄປເບິ່ງບ່ອນຈຸດທີ່ພົບ.
- ເວລາພວກເຮົາເອົາໂປສເຕີນະໂຍບາຍກອງທຶນການປິ່ນປົວຜູ້ຖືກເຄາະຮ້າຍ ຈາກລະເບີດບໍ່ທັນແຕກໃຫ້ແຕ່ລະສຸກສາລາເຫັນວ່າພະນັກງານໃນສຸກສາລາຍັງບໍ່ເຂົ້າໃຈກ່ຽວກັບນະໂຍບາຍດັ່ງກ່າວໄດ້ເທົ່າທີ່ຄວນ.
- ແຜນໃນຕໍ່ໜ້າ ສືບຕໍ່ລົງໂຄສະນາຄວາມສ່ຽງ ຕອນເຊົ້າ ແລະ ຕອນຄໍ່າ ຢູ່ບ້ານເປົ້າໝາຍ ແລະ ໂຮງຮຽນ, ສືບຕໍ່ເຮັດການປະຊຸມ ເປີດບ້ານ ນໍາທີມງານສໍາຫຼວດ ແລະ ເອົາວຽກ ສຶກສາຄວາມສ່ຽງ ເຂົ້າໄປພ້ອມ, ສືບຕໍ່ເກັບກໍາສະຖິຕິຜູ້ໄດ້ຮັບຜົນກະທົບຈາກ ລບຕ.
7. ອົງການນໍ້າໃນນັກກິລາ (SOS) ຈັດການແຂ່ງຂັນກິລາບານເຕະນັກຮຽນສາມັນ ທີ່ເມືອງໝອກ ສົມທົບກັບກົມພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ, ຫ້ອງການສຶກສາທິການ ແລະ ກິລາເມືອງໝອກ.
- ຈຸດດີ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກໍາ ການປະສານງານຈາກແຕ່ລະພາກ ເລີ່ມຈາກສູນກາງເຖິງທ້ອງຖິ່ນໄດ້ຮັບຄວາມສະດວກ ແລະ ທັນກັບເວລາທີ່ກໍານົດ ເຮັດໃຫ້ກິດຈະກໍາໄດ້ດໍາເນີນເປັນປົກກະຕິ, ຜູ້ປະສານງານຂັ້ນແຂວງ, ເມືອງ ແລະ ຄູໃນໂຮງຮຽນທີ່ໄດ້ຮັບການຝຶກອົບຮົມສາມາດປະກອບສ່ວນ ແລະ ມີສ່ວນຮ່ວມ ກັບພະນັກງານຄູຝຶກຂອງໂຄງການ.
- ຈໍານວນອຸປະກອນອາດຈະຍັງບໍ່ທັນພຽງພໍກັບຄວາມຕ້ອງການ ເນື່ອງຈາກໂຮງຮຽນມີຄວາມຂາດເຂີນຫລາຍດ້ານແຕ່ ໂຄງການບໍ່ສາມາດຕອບສະໜອງໄດ້ທຸກຢ່າງເຊັ່ນ: ບານບ້ວງ, ບານສົ່ງ, ເປຕັງ, ປີ້ງປ່ອງ ແລະ ອຸປະກອນ ການສອນ ວິຊາພະລະສຶກສາ ອື່ນໆ.
- ຈໍານວນຄູຝຶກໂຄງການບາງຄັ້ງມີໜ້ອຍກົ່ວຈໍານວນນັກຮຽນທີ່ຕ້ອງການເຂົ້າຮ່ວມ ເພື່ອໃຫ້ນັກຮຽນໄດ້ເຂົ້າຮ່ວມໝົດທຸກຄົນຕ້ອງໄດ້ປະຕິບັດເປັນສອງຮອບ.
- ສໍາລັບກິດຈະກໍາທີ່ແຂວງສາລະວັນ ເຊິ່ງພວກເຮົາໄດ້ຮ່ວມມືກັບ ຄກລ ປະຈຸບັນ ຢູ່ໃນໄລຍະກຽມປະເມີນທ້າຍໂຄງການ ແລະ ສະເໜີສືບຕໍ່ໂຄງການໃໝ່.

ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,ໄປສະນີ 726, ໂທ: (85621) 262386, ແຟັກ : 262396,
ເປີອີເມວ : uxo.nra@gmail.com, www.nra.gov.la

**ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:**

1. ຢາກໃຫ້ໜ່ວຍງານຖານຂໍ້ມູນພັດທະນາເລື່ອງການລາຍງານເຂົ້າຖານຂໍ້ມູນເປັນລະບົບ 2 ພາສາ ພາສາລາວ ແລະ ພາສາອັງກິດ ໃນບ່ອນດຽວກັນເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ.
2. ສະເໜີບັນດາອົງການປະຕິບັດງານ ລາຍງານຫົວໜ້າເບິ່ງ ເຮັດແນວໃດວຽກງານ MRE ຈະພັດທະນາແບບໃດ ເພື່ອໃຫ້ໄດ້ທັງຈຸດປະສົງຂອງ ພວກເຮົາ ແລະ ສອດຄ່ອງກັບຈຸດປະສົງຂອງຜູ້ໃຫ້ທຶນ.
3. ຫວັງຢ່າງຍິ່ງວ່າຈະໄດ້ຮັບການຮ່ວມມືທີ່ດີນຳບັນດາທ່ານ ເພື່ອຊ່ວຍກັນປັບປຸງໃຫ້ດີຂຶ້ນເລື້ອຍໆວຽກໂຄສະນາກໍ່ມີຄວາມຈຳເປັນຕ້ອງໄດ້ສືບຕໍ່ ເພື່ອເຮັດໃຫ້ປະຊາຊົນມີຄວາມປອດໄພ.
4. ວຽກໂຄສະນາຢາກລະດົມໃຫ້ໄດ້ທຶນເພີ່ມ ລະດົມທຶນຈາກ ການາດາ, ອາເມລິກາ ສ ເກົາຫລີ ແລະ ຜູ້ໃຫ້ທຶນອື່ນໆທີ່ສົນໃຈວຽກນີ້.

<u>**ໝາຍເຫດ**</u>: ສຳລັບລາຍລະອຽດຂອງການເຄື່ອນໄຫວກິດຈະກຳ ແລະ ແຜນການເຄື່ອນໄຫວເຮັດວຽກໃນໄຕມາດ ຕໍ່ໄປ ແລະ ແຜນວຽກໃນໄຕມາດ 02, 2018 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຂັດຕິດ.

**ປະທານກອງປະຊຸມ** | **ບັນທຶກກອງປະຊຸມໂດຍ:**

ຫ້ອງການ ອຊກລ

ບຸນພະມິດ ໂສມວິຈິດ
Mr.Bounphamith SOMVICHITH